ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ............/ລບ

ນະຄອນຫຼວງວຽງຈັນ, ວັນທີ........../2024

**(ຮ່າງ )**

# ດຳລັດ
# ວ່າດ້ວຍກະສິກຳສະອາດ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍ ກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນ ແລະ ການກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ......./ກປ, ລົງວັນທີ ................

**ລັດຖະບານ ອອກດຳລັດ:**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານກະສິກຳສະອາດ ເພື່ອພັດທະນາ ມາດຕະຖານ, ການກວດກາ, ການຢັ້ງຢືນ, ແລະ ຊຸກຍູ້ສົ່ງເສີມການຜະລິດພືດ ເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນໃຫ້ພືດ ແລະ ຜະລິດຕະພັນພືດ ມີຄຸນນະພາບ, ສະອາດ, ປອດໄພ ຕໍ່ສຸຂະພາບ, ຊີວິດ ຂອງ ຄົນ, ສັດ ແລະ ເປັນມິດກັບສິ່ງແວດລ້ອມ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ - ສັງຄົມ ຂອງຊາດ ຕາມທິດສະອາດ, ສີຂຽວ ແລະ ຍືນຍົງ.

**ມາດຕາ 2 ກະສິກຳສະອາດ**

ກະສິກຳສະອາດ ແມ່ນ ລະບົບການຜະລິດກະສິກຳ ແລະ ການເກັບກ່ຽວຜົນຜະລິດຈາກທຳມະຊາດ ທີ່ມີການຍັ່ງຍືນ ຄຸນນະພາບ, ຄວາມສະອາດ, ຄວາມປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຊຶ່ງປະກອບດ້ວຍ ການຜະລິດກະສິກຳອິນຊີ, ການຜະລິດກະສິກຳທີ່ດີ ແລະ ການຜະລິດກະສິກຳແບບອື່ນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຜະລິດກະສິກຳສະອາດ** ໝາຍເຖິງ ການດຳເນີນກິດຈະການກະສິກຳສະອາດ ເລີ່ມແຕ່ຂອດການຜະລິດ, ການປຸງແຕ່ງ ຈົນເຖິງການບໍລິການ.
2. **ຜູ້ປະກອບການ** ໝາຍເຖິງ ຜູ້ດຳເນີນການຜະລິດກະສິກຳ, ເກັບກ່ຽວ, ປຸງແຕ່ງ ແລະ ຈຳໜ່າຍຜົນຜະລິດກະສິກຳ ລວມທັງ ຂາຍສົ່ງ - ຂາຍຍ່ອຍ, ເກັບຊື້, ສົ່ງອອກ, ນຳເຂົ້າ ແລະ ຜະລິດ ປັດໄຈການຜະລິດ;
3. **ສານພິດຕົກຄ້າງ** ໝາຍເຖິງ ສານປະກອບສະເພາະໃດໜຶ່ງຂອງຢາປາບສັດຕູພືດ ແລະ ເຄມີກະສິກຳ ທີ່ຕົກຄ້າງໃນພືດ ແລະ ຜະລິດຕະພັນພືດ, ດິນ, ນ້ຳ, ອາຫານ, ສິນຄ້າກະສິກຳ, ອາຫານສັດ ທີ່ເກີນຄ່າມາດຕະຖານ ຕາມກຳນົດ ຂອງອົງການຈັດຕັ້ງສາກົນ ຫຼື ລະບຽບການກ່ຽວຂ້ອງ;
4. **ເຊື້ອຈຸລິນຊີ** ໝາຍເຖິງ ໄວຣັດ, ແບັກທີເຣຍ, ເຫັດລາ, ກາຝາກ ແລະ ເຊື້ອພະຍາດທີ່ມີຊີວິດທີ່ບໍ່ສາມາດເບິ່ງດ້ວຍຕາເປົ່າໄດ້;
5. **ສິ່ງແປກປອມ (Foreign Objects)** ໝາຍເຖິງ ສິ່ງທີ່ບໍ່ຕ້ອງການປະປົນຢູ່ກັບຜະລິດຕະພັນ ຫຼື ບໍລິເວນອ້ອມຮອບຜະລິດຕະພັນ ຊຶ່ງອາດກໍ່ໃຫ້ເກີດຜົນກະທົບຕໍ່ຄວາມປອດໄພ ຫຼື ຄຸນນະພາບຂອງຜົນຜະລິດ ເປັນຕົ້ນ ແກ້ວ, ໂລຫະ, ໄມ້, ກ້ອນຫີນ, ດິນ, ໃບໄມ້, ຜ້າຢາງ ຫຼື ຖົງຢາງ ແລະ ແກ່ນຫຍ້າ;
6. **ອົງການຈັດຕັ້ງສາກົນ ໄອເອສໂອ/ໄອອີຊີ(ISO/IEC: International Organization for Standardization/International Electrotechnical Commission)** ໝາຍເຖິງ ອົງການຈັດຕັ້ງສາກົນ ເພື່ອກຳນົດມາດຕະຖານ ແລະ ກິດຈະກຳ ທີ່ກ່ຽວຂ້ອງ ສຳລັບແລກປ່ຽນສິນຄ້າ ແລະ ການບໍລິການໃນການພັດທະນາ ແລະ ການຮ່ວມມືສາກົນ ທາງດ້ານວິຊາການ ວິທະຍາສາດ, ເຕັກໂນໂລຊີ ແລະ ເສດຖະກິດ;
7. **ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17011 (ISO/IEC 17011)** ໝາຍເຖິງ ມາດຕະຖານລະບົບຄຸນນະພາບ ຂອງການຮັບຮອງ ກ່ຽວກັບຂໍ້ກຳນົດທົ່ວໄປ ສຳລັບໜ່ວຍງານຮັບຮອງລະບົບບໍລິຫານ ເພື່ອຮັບຮອງໜ່ວຍງານກວດກາ ແລະ ຢັ້ງຢືນ;
8. **ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065 (ISO/IEC 17065)** ໝາຍເຖິງ ມາດຕະຖານລະບົບຄວບຄຸມຄຸນນະພາບ ຂອງໜ່ວຍງານຢັ້ງຢືນ;

9. **ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17025 (ISO/IEC 17025)** ໝາຍເຖິງ ມາດຕະຖານລະບົບຄຸນນະພາບຂອງຫ້ອງວິໄຈ ກ່ຽວກັບຂໍ້ກຳນົດເງື່ອນໄຂຂອງຫ້ອງວິໄຈ ສຳລັບການທົດສອບ, ທົດລອງ ແລະ ວິໄຈ;

10. **ພະນັກງານ ແລະ ນັກກວດກາກະສິກຳສະອາດ** ໝາຍເຖິງ ຜູ້ໄດ້ຮັບການແຕ່ງຕັ້ງໃຫ້ກວດກາວຽກງານກະສິກຳອິນຊີ ແລະ ກະສິກຳທີ່ດີ;

11. **ພືດສະເພາະ** ໝາຍເຖິງ ຜົນຜະລິດ ຫຼື ຜະລິດຕະພັນ ທີ່ກຳນົດຊະນິດຂອງພືດ;

12. **ສິນຄ້າພືດ** ໝາຍເຖິງ ຜົນຜະລິດ ຫຼື ຜະລິດຕະພັນພືດ ສຳລັບແລກປ່ຽນ, ຊື້ ແລະ ຂາຍ.

**ມາດຕາ 4 ຫຼັກການ ກ່ຽວກັບວຽກງານກະສິກຳສະອາດ**

ການເຄື່ອນໄຫວວຽກງານກະສິກຳສະອາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ຮັບປະກັນການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ, ວ່ອງໄວ, ຍຸຕິທຳ ແລະ ສາມາດກວດສອບໄດ້;
4. ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບວຽກງານກະສິກຳສະອາດ ຢູ່ ສປປ ລາວ.

ດຳລັດສະບັບນີ້ ບໍ່ນຳໃຊ້ ສຳລັບການລ້ຽງສັດ ແລະ ການປະມົງ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກະສິກຳສະອາດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິທະຍາສາດ, ເຕັກໂນໂລຊີ, ການຄ້າ, ການລົງທຶນ, ການພັດທະນາຊັບພະຍາກອນມະນຸດ, ການເຂົ້າຮ່ວມ ແລະ ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

# ພາກທີ II

# ການຜະລິດກະສິກຳສະອາດ

## ໝວດທີ 1

## ການຜະລິດກະສິກຳອິນຊີ

**ມາດຕາ 7 ການຜະລິດກະສິກຳອິນຊີ**

ການຜະລິດກະສິກຳອິນຊີ ແມ່ນລະບົບການຜະລິດ ທີ່ຮັກສາຄວາມຍືນຍົງ ຂອງຄວາມອຸດົມສົມບູນຂອງດິນ, ຄວາມສົມດູນຂອງລະບົບນິເວດວິທະຍາ ແລະ ມີຜົນດີຕໍ່ສຸຂະພາບຂອງຄົນ, ສັດ ໂດຍອີງໃສ່ຂະບວນການທາງນິເວດວິທະຍາ, ຄວາມຫຼາກຫຼາຍທາງຊີວະນາໆພັນ ແລະ ຮອບວຽນການຜະລິດທີ່ປັບໂຕເຂົ້າກັບສະພາບເງື່ອນໄຂຂອງທ້ອງຖິ່ນ, ທົດແທນການນຳໃຊ້ປັດໄຈການຜະລິດ ທີ່ອາດເກີດມີຜົນກະທົບທາງລົບ, ເປັນລະບົບປະສົມປະສານ ລະຫວ່າງຄວາມຮູ້ພູມປັນຍາທ້ອງຖິ່ນ, ເຕັກນິກ ແລະ ວິທະຍາສາດ ເພື່ອໃຫ້ເກີດຜົນປະໂຫຍດ ໃຫ້ແກ່ ຄົນ, ສັດ, ພືດ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

**ມາດຕາ 8 ເງື່ອນໄຂການຜະລິດກະສິກຳອິນຊີ**

ເງື່ອນໄຂການຜະລິດກະສິກຳອິນຊີ ມີດັ່ງນີ້:

1. ມີໄລຍະປັບປ່ຽນ ຫຼື ໄລຍະຂ້າມຜ່ານ ສຳລັບພືດຢືນຕົ້ນ ແມ່ນ 18 ເດືອນ ແລະ ພືດລົ້ມລຸກ ແມ່ນ 12 ເດືອນ;
2. ມີການຈັດການລະບົບການຜະລິດກະສິກຳອິນຊີ ທີ່ໄດ້ຮັບການຢັ້ງຢືນແລ້ວ ບໍ່ອະນຸຍາດໃຫ້ປ່ຽນໄປເຮັດການຜະລິດແບບອື່ນ. ໃນກໍລະນີ, ຫາກຢຸດການຜະລິດກະສິກຳອິນຊີ ໃນພື້ນທີ່ນັ້ນ ຕ້ອງ ຜ່ານໄລຍະປັບປ່ຽນ ຫຼື ໄລຍະຂ້າມຜ່ານ;
3. ມີການຜະລິດແບບຄູ່ຂະໜານ ໂດຍແຍກລະຫວ່າງການຜະລິດ ແລະ ຜົນຜະລິດແບບກະສິກຳອິນຊີ ແລະ ບໍ່ແມ່ນກະສິກຳອິນຊີ;
4. ທຸກຂະບວນການຜະລິດກະສິກຳອິນຊີ ບໍ່ໃຫ້ນຳໃຊ້ປັດໄຈການຜະລິດ ທີ່ເປັນຜະລິດຕະພັນ ຈາກການຕັດແຕ່ງພັນທຸກຳ, ສານເຄມີສັງເຄາະ ແລະ ສານເຄມີອື່ນ, ມີມາດຕະການປ້ອງກັນ ໂດຍການ ສ້າງແນວກັ້ນ ຫຼື ແລວປ້ອງກັນໃຫ້ເໝາະສົມ, ໃນກໍລະນີ ປະເມີນພົບເຫັນມີການປົນເປື້ອນ ທີ່ມີຄວາມສ່ຽງສູງ ຕ້ອງມີການວິໄຈ ແລະ ໄຈ້ແຍກ;
5. ນຳໃຊ້ມາດຕະການປ້ອງກັນ ການສູນເສຍ ແລະ ການເສື່ອມໂຊມຂອງດິນ, ມີແຜນນຳໃຊ້ນ້ຳຢ່າງເໝາະສົມ, ນຳໃຊ້ວັດສະດຸອິນຊີ ເພື່ອເຮັດຝຸ່ນຊວບ ແລະ ຝຸ່ນບົ່ມ, ບໍ່ໃຫ້ຈູດພືດ ແລະ ບໍ່ໃຫ້ນຳໃຊ້ສິ່ງເສດ ເຫຼືອຈາກຄົນ ໃນພື້ນທີ່ການຜະລິດກະສິກຳອິນຊີ;
6. ນຳໃຊ້ເມັດພັນ ແລະ ແນວພັນທີ່ມີຄຸນນະພາບຈາກການຜະລິດກະສິກຳອິນຊີ, ຍົກເວັ້ນໃນກໍລະນີ
7. ເມັດພັນ ຫຼື ແນວພັນນັ້ນ ບໍ່ສາມາດຫາໄດ້ໃນທ້ອງຖິ່ນ ແລະ ບໍ່ໃຫ້ນຳໃຊ້ແນວພັນຕັດແຕ່ງພັນທຸກຳ;

8. ຮັກສາຄວາມຫຼາກຫຼາຍທາງດ້ານຊີວະນານາພັນພືດ, ແຫຼ່ງທີ່ຢູ່ອາໄສຂອງສິ່ງທີ່ມີຊີວິດ ແລະ ບໍ່ສົ່ງ ຜົນກະທົບທາງລົບຕໍ່ພື້ນທີ່ອະນຸລັກ ແລະ ພື້ນທີ່ມໍລະດົກ;
9. ການຈັດການສັດຕູພືດ ແລະ ການຈະເລີນເຕີບໂຕ ດ້ວຍນຳໃຊ້ຂະບວນການ ແລະ ກົນໄກ ສຳລັບ ການຈັດການສັດຕູພືດ ເປັນຕົ້ນ ວິທີການປູກ, ການປູກພືດອາໄສ, ການເລືອກແນວພັນທີ່ເໝາະສົມ ແລະ ເພີ່ມຄວາມຫຼາກຫຼາຍທາງດ້ານຊີວະນານາພັນພືດ;
10. ການຈັດການທັງການເກັບກ່ຽວ, ການປຸງແຕ່ງ, ການຫຸ້ມຫໍ່, ການເກັບຮັກສາ ແລະ ການຂົນສົ່ງ ຕ້ອງມີມາດຕະການປ້ອງກັນການປົນເປື້ອນ ແລະ ບໍ່ໃຫ້ປົນກັນ ລະຫວ່າງ ຜົນຜະລິດກະສິກຳອິນຊີ ກັບຜົນຜະລິດບໍ່ແມ່ນກະສິກຳອິນຊີ ຢູ່ໃນຂະບວນການຜະລິດ ແລະ ປະຕິບັດຕາມມາດຕະຖານສຸຂານາໄມທີ່ດີ, ມາດຕະຖານການຜະລິດທີ່ດີ;
11. ຜົນຜະລິດ ທີ່ໄດ້ຮັບການຢັ້ງຢືນ ຕ້ອງມີກາໝາຍກະສິກຳອິນຊີລາວ. ສຳລັບຜະລິດຕະພັນທີ່ໄດ້ຮັບການຢັ້ງຢືນແລ້ວ ຕ້ອງຕິດກາໝາຍກະສິກຳອິນຊີລາວ ແລະ ຕິດສະຫຼາກກຳກັບ. ຜົນຜະລິດ ແລະ ຜະລິດຕະພັນກະສິກຳອິນຊີ ຢູ່ໃນໄລຍະການປັບປ່ຽນ ບໍ່ອະນຸຍາດໃຫ້ນຳໃຊ້ກາໝາຍກະສິກຳອິນຊີລາວ;
12. ທຸກຂັ້ນຕອນການຜະລິດ, ການປຸງແຕ່ງ ຈົນຮອດຜະລິດຕະພັນສຳເລັດຮູບໃນທຸກຂັ້ນຕອນ ຂອງຕ່ອງໂສ້ການສະໜອງ ຕ້ອງມີການບັນທຶກ, ມີຄວາມໂປ່ງໃສ ແລະ ສາມາດກວດສອບຄືນຫຼັງໄດ້;
13. ປະຕິບັດຕາມເງື່ອນໄຂອື່ນ ທີ່ກະຊວງ ກະສິກຳ ແລະ ປ່າໄມ້ ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 9 ການເກັບກ່ຽວຜົນຜະລິດຈາກທຳມະຊາດ ຕາມມາດຕະຖານກະສິກຳອິນຊີ**

ການເກັບກ່ຽວຜົນຜະລິດຈາກທຳມະຊາດ ຕາມມາດຕະຖານກະສິກຳອິນຊີ ຕ້ອງປະຕິບັດ ດັ່ງນີ້:

1. ເກັບກ່ຽວແບບຍືນຍົງ ແລະ ອະນຸລັກ;
2. ເກັບກ່ຽວພາຍໃນບໍລິເວນທີ່ກຳນົດໃຫ້ເທົ່ານັ້ນ, ພື້ນທີ່ເກັບກ່ຽວຜົນຜະລິດທີ່ບໍ່ໄດ້ນຳໃຊ້ເຮັດການຜະລິດ ຫຼື ບໍ່ໄດ້ນຳໃຊ້ສານເຄມີຕ້ອງຫ້າມ ຢ່າງໜ້ອຍ ສາມ ປີ;
3. ຕ້ອງເປັນສະມາຊິກພາຍໃນບ້ານ ແລະ ໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານທີ່ກ່ຽວຂ້ອງ;
4. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10 ປັດໄຈການຜະລິດກະສິກຳອິນຊີ ເພື່ອການຄ້າ**

ປັດໄຈການຜະລິດກະສິກຳອິນຊີ ເພື່ອການຄ້າ ແມ່ນປັດໄຈການຜະລິດທີ່ຜ່ານຂະບວນການຜະລິດ ແລະ ປຸງແຕ່ງ ເພື່ອຜົນປະໂຫຍດທາງການຄ້າ ເປັນຕົ້ນ ຝຸ່ນອິງຄະທາດ, ສານປັບປຸງດິນ, ສານເລັ່ງການຈະເລີນເຕີບໂຕ, ສະໝຸນໄພປ້ອງກັນພືດ ໂດຍປະຕິບັດຕາມເງື່ອນໄຂມາດຕະຖານກະສິກຳອິນຊີທີ່ໄດ້ກຳນົດ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ. ສຳລັບປັດໄຈການຜະລິດກະສິກຳອິນຊີ ທີ່ຜະລິດໃນພື້ນທີ່ການຜະລິດ ແມ່ນສາມາດນຳໃຊ້ໄດ້. ສຳລັບປັດໄຈການຜະລິດກະສິກຳອິນຊີທີ່ນຳເຂົ້າ ຕ້ອງໄດ້ຮັບການຢັ້ງຢືນມາດຕະຖານກະສິກຳອິນຊີ ຈາກໜ່ວຍງານທີ່ໄດ້ຮັບການຢັ້ງຢືນມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065 (ISO/IEC 17065) ຂອງ

ປະເທດຕົ້ນທາງ ແລ້ວຕ້ອງຂຶ້ນທະບຽນນຳກະຊວງ ກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ຈຶ່ງສາມາດນຳໃຊ້ໄດ້.

**ມາດຕາ 11 ການຈັດການຜົນຜະລິດກະສິກຳອິນຊີ**

ທຸກຂັ້ນຕອນການຈັດການຫຼັງການເກັບກ່ຽວ, ການປຸງແຕ່ງ, ການຫຸ້ມຫໍ່, ການເກັບຮັກສາ ແລະ ການຂົນສົ່ງ ເພື່ອຮັກສາຄຸນລັກສະນະຂອງຜະລິດຕະພັນ ຕ້ອງປະຕິບັດຕາມມາດຕະຖານອະນາໄມທີ່ດີ ແລະ ມາດຕະຖານການຜະລິດທີ່ດີ.

## ໝວດທີ 2
## ການຜະລິດກະສິກຳທີ່ດີ

**ມາດຕາ 12 ການຜະລິດກະສິກຳທີ່ດີ**

ການຜະລິດກະສິກຳທີ່ດີ ແມ່ນ ລະບົບການຜະລິດ ທີ່ນຳໃຊ້ວິທີການ ແລະ ມາດຕະການຄວບຄຸມ ເລີ່ມແຕ່ ການຜະລິດ, ການເກັບກ່ຽວ ແລະ ຫຼັງການເກັບກ່ຽວ ເພື່ອປ້ອງກັນ ຫຼື ຫຼຸດຜ່ອນຄວາມສ່ຽງທີ່ເປັນອັນຕະລາຍ ຕໍ່ຜົນຜະລິດ, ຮັບປະກັນຄວາມສະອາດ ແລະ ຄວາມປອດໄພ ໃຫ້ແກ່ຜູ້ຜະລິດ ແລະ ຜູ້ບໍລິໂພກ.

**ມາດຕາ 13 ເງື່ອນໄຂການຜະລິດກະສິກຳທີ່ດີ**

ເງື່ອນໄຂການຜະລິດກະສິກຳທີ່ດີ ກ່ຽວກັບຄວາມປອດໄພຂອງຜົນຜະລິດ ປະກອບດ້ວຍ:

1. ປະຫວັດ ແລະ ການຈັດການພື້ນທີ່ ຕ້ອງເປັນພື້ນທີ່ບໍ່ມີຄວາມສ່ຽງການປົນເປື້ອນສານເຄມີ, ທາດໂລຫະໜັກ ແລະ ເຊື້ອຈຸລິນຊີອັນຕະລາຍ;
2. ການນຳໃຊ້ແນວພັນພືດໃຫ້ນຳໃຊ້ເມັດພັນ ແລະ ແນວພັນທີ່ມີຄຸນນະພາບຈາກການຜະລິດກະສິກຳທີ່ດີ, ບັນທຶກການນຳໃຊ້ສານເຄມີ ແລະ ເຫດຜົນການນຳໃຊ້, ບັນທຶກແຫຼ່ງທີ່ມາແນວພັນພືດ;
3. ການນຳໃຊ້ຝຸ່ນ ແລະ ສານປັບປຸງດິນ ຕ້ອງໄດ້ປະເມີນຜົນຜະລິດພືດແຕ່ລະຊະນິດ ທີ່ມີຄວາມສ່ຽງຕໍ່ການປົນເປື້ອນ ສານເຄມີ ແລະ ເຊື້ອຈຸລິນຊີ, ບໍ່ໃຫ້ນຳໃຊ້ອິນຊີວັດຖຸທີ່ບໍ່ຜ່ານການບົ່ມ ຫຼື ໝັກ ເຂົ້າໃນການຜະລິດ, ບໍ່ໃຫ້ນຳໃຊ້ສິ່ງເສດເຫຼືອຈາກຄົນ;
4. ການນຳໃຊ້ນ້ຳ ຕ້ອງມີການປະເມີນຄວາມສ່ຽງຂອງນ້ຳ ຈາກສານເຄມີ ແລະ ເຊື້ອຈຸລິນຊີ ກ່ອນການນຳໃຊ້ເຂົ້າສູ່ການຜະລິດ, ໃນກໍລະນີ ນ້ຳມີຄວາມສ່ຽງຕໍ່ການປົນເປື້ອນ ຕ້ອງທົດສອບຄຸນນະພາບນ້ຳ, ບໍ່ໃຫ້ນຳໃຊ້ນ້ຳເປື້ອນທີ່ບໍ່ຜ່ານການບຳບັດ ໃນລະຫວ່າງການຜະລິດ ແລະ ການຈັດການຜົນຜະລິດຫຼັງການເກັບກ່ຽວ;
5. ການນຳໃຊ້ສານເຄມີ ແລະ ຢາປາບສັດຕູພືດ ຕ້ອງປະຕິບັດ ຕາມສະຫຼາກ, ໄລຍະຕົກຄ້າງຂອງສານເຄມີ ແລະ ຢຸດນຳໃຊ້ກ່ອນການເກັບກ່ຽວ ຕາມກຳນົດຂອງສານເຄມີແຕ່ລະຊະນິດ, ບໍ່ໃຫ້ປະສົມສານເຄມີຫຼາຍກວ່າສອງຊະນິດ, ສານເຄມີທີ່ເຫຼືອຈາກການປະສົມນຳໃຊ້ ຕ້ອງກຳຈັດໃຫ້

ຖືກວິທີ, ບໍ່ໃຫ້ນຳເອົາພາຊະນະບັນຈຸສານເຄມີເປົ່າມາໃຊ້ຄືນໃໝ່ ແລະ ຕ້ອງເກັບມ້ຽນໄວ້ໃນບ່ອນທີ່ປອດໄພ ຈົນກວ່າຈະຖືກ ກຳຈັດ ຫຼື ທຳລາຍ;

6. ການເກັບກ່ຽວ ແລະ ການຈັດການຜົນຜະລິດ ຕ້ອງນຳໃຊ້ວັດຖຸປະກອບ, ພາຊະນະບັນຈຸ ແລະ ເຄື່ອງມືຕ່າງໆ ທີ່ຜະລິດມາຈາກວັດຖຸທີ່ບໍ່ປົນເປື້ອນຕໍ່ຜົນຜະລິດ, ບໍ່ໃຫ້ນຳໃຊ້ພາຊະນະທີ່ໃຊ້ບັນຈຸສິ່ງເສດເຫຼືອສານເຄມີ ແລະ ວັດຖຸທີ່ເປັນອັນຕະລາຍ, ບໍ່ໃຫ້ວາງຜົນຜະລິດໃສ່ໜ້າດິນ ຫຼື ພື້ນຫ້ອງໂດຍກົງ ໃນລະຫວ່າງການເກັບກ່ຽວ ແລະ ການເກັບຮັກສາຜົນຜະລິດ;

7. ເຄຫາສະຖານ (ໂຮງເຮືອນ ແລະ ໂຄງສ້າງ) ທີ່ໃຊ້ສຳລັບການປຸກ, ການຫຸ້ມຫໍ່, ການຈັດການ ແລະ ການເກັບຮັກສາຜົນຜະລິດ ຕ້ອງໄດ້ຮັບການບຸລະນະຮັກສາໃຫ້ຢູ່ໃນສະພາບດີ, ສ້າງລະບົບລະບາຍ ນ້ຳເປື້ອນ ແລະ ກຳຈັດຂີ້ເຫຍື້ອ, ດອກໄຟ ຢູ່ເບື້ອງເທິງສະຖານທີ່ຈັດການຜົນຜະລິດຕ້ອງມີສິ່ງປ້ອງກັນ, ພາຊະນະບັນຈຸ ແລະ ເຄື່ອງມື ຕ້ອງເຮັດຄວາມສະອາດເປັນປົກກະຕິ;

8. ການທຳຄວາມສະອາດ ແລະ ອະນາໄມ ສຳລັບ ສະຖານທີ່ຫຸ້ມຫໍ່, ສາງເກັບຮັກສາ, ສາງເກັບມ້ຽນ ຜົນຜະລິດ, ອຸປະກອນເຄື່ອງມື, ພາຊະນະບັນຈຸ ແລະ ບັນດາອຸປະກອນຕ່າງໆ ຕ້ອງເຮັດຄວາມ ສະອາດ ແລະ ຂ້າເຊື້ອພະຍາດ;

9. ການຄວບຄຸມສັດລ້ຽງ ແລະ ສັດຕູພືດ ຕ້ອງສະກັດກັ້ນສັດລ້ຽງຕ່າງໆທີ່ຢູ່ຕາມບ້ານ ແລະ ຢູ່ໃນຟາມ ບໍ່ໃຫ້ເຂົ້າມາໃນພື້ນທີ່ການຜະລິດ, ອ້ອມຮອບສະຖານທີ່ເກັບຮັກສາ, ຫຸ້ມຫໍ່ ແລະ ສາງເກັບ ຮັກສາຜົນຜະລິດ, ພ້ອມທັງນຳໃຊ້ມາດຕະການປ້ອງກັນຕ່າງໆຢ່າງເໝາະສົມ ເພື່ອປ້ອງກັນ ແລະ ກຳຈັດສັດຕູພືດ;

10. ການອະນາໄມສ່ວນບຸກຄົນ ຂອງຜູ້ອອກແຮງງານ ຕ້ອງມີຄູ່ມືການອະນາໄມສ່ວນບຸກຄົນ ແລະ ວາງໄວ້ບ່ອນທີ່ເຫັນໄດ້ງ່າຍ, ມີຫ້ອງນ້ຳ ແລະ ສິ່ງອຳນວຍຄວາມສະດວກ ໃນການເຮັດອະນາໄມສ່ວນບຸກຄົນ;

11. ການຮັກສາຄຸນນະພາບຜົນຜະລິດ ຕ້ອງນຳໃຊ້ນ້ຳທີ່ສະອາດ, ສາມາດດື່ມໄດ້ ຫຼື ມີຄ່າເທົ່າກັບມາດຕະຖານຄຸນນະພາບຂອງນ້ຳດື່ມ ສຳລັບລ້າງຜົນຜະລິດຄັ້ງສຸດທ້າຍ ແລະ ນຳໃຊ້ສານເຄມີ ທີ່ອະນຸຍາດ ເພື່ອຮັກສາຄຸນນະພາບຜົນຜະລິດພາຍຫຼັງການເກັບກ່ຽວ;

12. ການເກັບຮັກສາ ແລະ ການຂົນສົ່ງ ບໍ່ໃຫ້ວາງພາຊະນະບັນຈຸຜົນຜະລິດຕິດກັບດິນ, ກວດກາ ແລະ ເຮັດຄວາມສະອາດ ພາຊະນະຮອງພື້ນກ່ອນການນຳໃຊ້ທຸກຄັ້ງ ແລະ ແຍກຜົນຜະລິດກະສິກຳທີ່ດີ ອອກຈາກສິນຄ້າທົ່ວໄປ;

13. ຕ້ອງໃສ່ຊື່ ແລະ ເລກລະຫັດພື້ນທີ່ການຜະລິດ, ພ້ອມທັງລະບຸໃສ່ໃນແຜນທີ່ ທີ່ກຳນົດໄວ້ ແລະ ບັນທຶກຂໍ້ມູນການຜະລິດ, ການຂາຍຜົນຜະລິດ ເພື່ອສາມາດກວດຄືນຫຼັງ ແລະ ຮຽກຄືນໄດ້. ໃນກໍລະນີ ພົບວ່າ ຜົນຜະລິດ ມີການປົນເປື້ອນ ຫຼື ມີຄວາມສ່ຽງຕໍ່ການປົນເປື້ອນ ຕ້ອງແຍກຜົນຜະລິດອອກຕ່າງຫາກ ແລະ ບໍ່ໃຫ້ຈຳໜ່າຍ;

14. ມີການຝຶກອົບຮົມ ສຳລັບຜູ້ນຳໃຊ້ແຮງງານ ແລະ ຜູ້ອອກແຮງງານ ຕ້ອງໄດ້ຮັບການຝຶກອົບຮົມ ແລະ ມີຄວາມຮູ້ ກ່ຽວກັບການປະຕິບັດມາດຕະຖານກະສິກຳທີ່ດີ;

15. ການບັນທຶກ ແລະ ເກັບຮັກສາເອກະສານ ຕ້ອງເກັບໄວ້ຢ່າງໜ້ອຍ ສອງ ປີ ຂຶ້ນໄປ ຫຼື ດົນກວ່ານັ້ນ ແລະ ນຳໃຊ້ເອກະສານປັດຈຸບັນ;
16. ການທົບທວນຄືນ ຕ້ອງປະຕິບັດຢ່າງໜ້ອຍປີລະຄັ້ງ, ເກັບຮັກສາບົດບັນທຶກ ແລະ ມີມາດຕະການແກ້ໄຂຂໍ້ສະເໜີ ກ່ຽວກັບຄວາມປອດໄພຂອງຜົນຜະລິດ.
17. ປະຕິບັດຕາມເງື່ອນໄຂອື່ນ ທີ່ກະຊວງ ກະສິກຳ ແລະ ປ່າໄມ້ ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 14 ການຈັດການຜົນຜະລິດກະສິກຳທີ່ດີ**

ການຈັດການຜົນຜະລິດກະສິກຳທີ່ດີ ແມ່ນ ການຈັດການຂະບວນການຜະລິດ, ການເກັບກ່ຽວ, ການຈັດການເຄຫາສະຖານ ທີ່ໃຊ້ສຳລັບການປູກ, ການຫຸ້ມຫໍ່, ການຈັດການ ແລະ ການເກັບຮັກສາຜົນຜະລິດ, ການທຳຄວາມສະອາດ ແລະ ອະນາໄມ ສະຖານທີ່, ການອະນາໄມສ່ວນບຸກຄົນ, ການຄວບຄຸມສັດລ້ຽງ ແລະ ສັດຕູພືດ, ການຮັກສາຄຸນນະພາບຜົນຜະລິດ, ການເກັບຮັກສາ ແລະ ການຂົນສົ່ງ ໂດຍນຳໃຊ້ວິທີການ ແລະ ມາດຕະການຄວບຄຸມ ເພື່ອຫຼຸດຜ່ອນການປົນເປື້ອນ ແລະ ສິ່ງທີ່ເປັນອັນຕະລາຍຕໍ່ຜົນຜະລິດ, ຮັບປະກັນຄວາມສະອາດ ແລະ ຄວາມປອດໄພຂອງຜົນຜະລິດ.

## ພາກທີ III
## ລະບົບກະສິກຳສະອາດ

**ມາດຕາ 15 ລະບົບກະສິກຳສະອາດ**

ລະບົບກະສິກຳສະອາດ ປະກອບດ້ວຍ:

1. ມາດຕະຖານ ກະສິກຳອິນຊີ;
2. ມາດຕະຖານ ກະສິກຳທີ່ດີ;
3. ມາດຕະຖານ ສິນຄ້າພືດ.

**ມາດຕາ 16 ມາດຕະຖານກະສິກຳອິນຊີ**

ມາດຕະຖານກະສິກຳອິນຊີ ແມ່ນ ມາດຕະຖານລວມຂອງການຜະລິດພືດ ຊຶ່ງກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ບົນພື້ນຖານການເຊື່ອມໂຍງມາດຕະຖານ, ການກວດກາ ແລະ ການຢັ້ງຢືນ ກັບພາກພື້ນ ແລະ ສາກົນ.

**ມາດຕາ 17 ມາດຕະຖານກະສິກຳທີ່ດີ**

ມາດຕະຖານກະສິກຳທີ່ດີ ແມ່ນມາດຕະຖານລວມຂອງການຜະລິດພືດ ຊຶ່ງກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ບົນພື້ນຖານການເຊື່ອມໂຍງມາດຕະຖານ, ການກວດກາ ແລະ ການຢັ້ງຢືນ ກັບພາກພື້ນ ແລະ ສາກົນ.

**ມາດຕາ 18 ມາດຕະຖານສິນຄ້າພືດ**

ມາດຕະຖານສິນຄ້າພືດ ແມ່ນ ການກຳນົດຄຸນນະພາບ ແລະ ຄວາມປອດໄພ ຂອງຜົນຜະລິດ ໂດຍສະເພາະ ສີ, ຣົດຊາດ, ຂະໜາດ, ນ້ຳໜັກ ກົງກັບຄຸນລັກສະນະທາງຊີວະ - ເຄມີ ຂອງພືດ ລວມທັງ ການຫຸ້ມຫໍ່, ບັນຈຸ, ສະຫຼາກ ແລະ ການໝາຍ ສອດຄ່ອງກັບມາດຕະຖານ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຜູ້ສະໜອງ ແລະ ຜູ້ບໍລິໂພກ ຊຶ່ງເປັນທີ່ຍອມຮັບ ຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ.

ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ແລະ ຮັບຮອງ ມາດຕະຖານສິນຄ້າພືດ ໃນແຕ່ລະໄລຍະ.

**ມາດຕາ 19 ການທົບທວນ ແລະ ປັບປຸງລະບົບກະສິກຳສະອາດ**

ລະບົບກະສິກຳສະອາດຕ້ອງໄດ້ທົບທວນການຈັດຕັ້ງປະຕິບັດທຸກໆ ຫ້າ ປີ ຫຼື ປະຕິບັດຕາມການສະເໜີຂອງຜູ້ປະກອບການ.

# ພາກທີ IV
# ການພັດທະນາ ແລະ ການສົ່ງເສີມກະສິກຳສະອາດ
## ໝວດທີ 1
## ການພັດທະນາວຽກງານກະສິກຳສະອາດ

**ມາດຕາ 20 ການພັດທະນາວຽກງານກະສິກຳສະອາດ**

ການພັດທະນາວຽກງານກະສິກຳສະອາດ ປະກອບມີດັ່ງນີ້:

1. ໂຄງລ່າງພື້ນຖານ;
2. ອົງກອນ ແລະ ຊັບພະຍາກອນມະນຸດ.

**ມາດຕາ 21 ໂຄງລ່າງພື້ນຖານ**

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການພັດທະນາພື້ນຖານໂຄງລ່າງ ດັ່ງນີ້:

1. ພັດທະນາ ສູນມາດຕະຖານກະສິກຳສະອາດ ແລະ ສ້າງສະຖານທີ່ ເພື່ອເປັນບ່ອນສຶກສາ ຄົ້ນຄວ້າທົດລອງ, ສາທິດ, ຝຶກອົບຮົມ, ທັດສະນະສຶກສາ, ແລກປ່ຽນບົດຮຽນວິຊາການ ແລະ ຖ່າຍທອດ ເຕັກໂນໂລຊີກະສິກຳສະອາດ ຢູ່ພາຍໃນ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
2. ສ້າງ ແລະ ພັດທະນາ ຫ້ອງວິໄຈ, ໂຮງເຮືອນປູກພືດທັນສະໄໝ, ສາງເກັບມ້ຽນ ເພື່ອຮັບປະກັນຄຸນນະພາບ ມາດຕະຖານສິນຄ້າພືດໃຫ້ສອດຄ່ອງຕາມມາດຕະຖານ ຂອງພາກພື້ນ ແລະ ສາກົນ.

**ມາດຕາ 22 ການພັດທະນາ ອົງກອນ ແລະ ຊັບພະຍາກອນມະນຸດ**

ລັດ ສົ່ງເສີມການສ້າງ ແລະ ການພັດທະນາອົງກອນ ແລະ ຊັບພະຍາກອນມະນຸດ ໃຫ້ປະຕິບັດ ດັ່ງນີ້:

1. ໜ່ວຍງານຮັບຮອງລະບົບການຢັ້ງຢືນກະສິກຳສະອາດຂັ້ນສູນກາງ ໃຫ້ສອດຄ່ອງມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17011 (ISO/IEC 17011);
2. ໜ່ວຍງານອອກໃບຢັ້ງຢືນ ຂັ້ນສູນກາງ ແລະ ຂັ້ນແຂວງ ໃຫ້ສອດຄ່ອງຕາມມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065 (ISO/IEC 17065);
3. ຍົກລະດັບຄວາມຮູ້ວິຊາການສະເພາະດ້ານການກວດສອບ, ການກວດກາ ແລະ ການຢັ້ງຢືນ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ເປັນຕົ້ນ ນັກກວດສອບ, ນັກກວດກາ ຂັ້ນສູນກາງ ແລະ ຂັ້ນແຂວງ, ທີ່ປຶກສາຟາມ ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ວິຊາການກວດກາຄຸນນະພາບ ພາຍໃນ ຂອງຜູ້ປະກອບການ;
4. ສ້າງ ວິທະຍາກອນ, ຄູຝຶກ ກ່ຽວກັບກະສິກຳສະອາດ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ເປັນຊ່ຽວຊານສະເພາະດ້ານ;
5. ສ້າງ ແລະ ພັດທະນາ ຫຼັກສູດກະສິກຳສະອາດ ເຂົ້າໃນສະຖາບັນການສຶກສາ.

## ໝວດທີ 2
## ການສົ່ງເສີມກະສິກຳສະອາດ

**ມາດຕາ 23 ການສົ່ງເສີມກະສິກຳສະອາດ**

ການສົ່ງເສີມກະສິກຳສະອາດ ປະກອບດ້ວຍ:

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ;
2. ການນຳໃຊ້ທີ່ດິນຂອງລັດ;
3. ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ;
4. ການເຂົ້າເຖິງແຫຼ່ງທຶນ;
5. ນະໂຍບາຍດ້ານພາສີ ແລະ ອາກອນ;
6. ການບໍລິການໃຫ້ຄຳປຶກສາ ແລະ ພັດທະນາ;
7. ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ;
8. ການນຳໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ;
9. ການນຳໃຊ້ ແລະ ການຖ່າຍທອດເຕັກໂນໂລຊີ.

**ມາດຕາ 24 ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ**

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງເອົາໃຈໃສ່ຕໍ່ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ຜູ້ປະກອບການກະສິກຳສະອາດ ດ້ວຍການສ້າງ ແລະ ປັບປຸງລະບຽບການ ໃຫ້ມີຄວາມຈະແຈ້ງ ແລະ ຮັດກຸມ, ສ້າງເວທີປຶກສາຫາລືດ້ານວິຊາການ ລະຫວ່າງພາກລັດ ແລະ ພາກ

ທຸລະກິດ, ກຳນົດວິທີການແກ້ໄຂບັນຫາ ທີ່ເປັນການກີດໜ່ວງ ພ້ອມກັນນັ້ນກໍຕ້ອງເພີ່ມທະວີການບໍລິຫານ ແລະ ການບໍລິການຂອງຕົນໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສ.

**ມາດຕາ 25 ການນຳໃຊ້ທີ່ດິນຂອງລັດ**

ຂະແໜງການ ແລະ ອົງການ ທີ່ກ່ຽວຂ້ອງ ເປັນເຈົ້າການສົມທົບກັບອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ ແລະ ຈັດສັນທີ່ດິນຂອງລັດ ທີ່ກຳນົດເປັນເຂດຜະລິດ, ເຂດອານຸລັກ ໃຫ້ຜູ້ປະກອບການກະສິກຳສະອາດປົກປັກຮັກສາ ແລະ ນຳໃຊ້, ບໍ່ປ່ຽນເປົ້າໝາຍການນຳໃຊ້ ໂດຍສອດຄ່ອງກັບແຜນການຈັດສັນທີ່ດິນແຫ່ງຊາດ.

**ມາດຕາ 26 ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ**

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນເຈົ້າການຄົ້ນຄວ້າ ສ້າງ ແລະ ສະໜອງ ໂຄງລ່າງພື້ນຖານທີ່ຈຳເປັນ ຕາມແຜນພັດທະນາເສດຖະກິດສັງຄົມ ເພື່ອສ້າງເງື່ອນໄຂສະດວກໃຫ້ຜູ້ປະກອບການກະສິກຳສະອາດ ສາມາດນຳໃຊ້ເຂົ້າ ໃນການຜະລິດ, ດຳເນີນທຸລະກິດ ເປັນຕົ້ນ ເສັ້ນທາງຄົມມະນາຄົມ, ຊົນລະປະທານ, ຕາໜ່າງໄຟຟ້າ ແລະ ເຄືອຂ່າຍອິນເຕີເນັດ.

**ມາດຕາ 27 ການເຂົ້າເຖິງແຫຼ່ງທຶນ**

ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງຄົ້ນຄວ້າຊອກຫາແຫຼ່ງທຶນ ຫຼື ສ້າງເງື່ອນໄຂ ໃຫ້ຜູ້ປະກອບການ ກະສິກຳສະອາດ ສາມາດເຂົ້າເຖິງແຫຼ່ງທຶນ.

ທະນາຄານ ແຫ່ງ ສປປ ລາວ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນ ສ້າງກົນໄກ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດ ໃນການສະໜອງສິນເຊື່ອ, ການຄ້ຳປະກັນສິນເຊື່ອ ແລະ ການເຊົ່າສິນເຊື່ອ ເພື່ອຮັບປະກັນ ໃຫ້ຜູ້ປະກອບການກະສິກຳສະອາດ ສາມາດເຂົ້າເຖິງແຫຼ່ງທຶນໄດ້ ຢ່າງທົ່ວເຖິງ.

**ມາດຕາ 28 ນະໂຍບາຍດ້ານພາສີ ແລະ ອາກອນ**

ຜູ້ປະກອບການກະສິກຳສະອາດ ຈະໄດ້ຮັບນະໂຍບາຍ ດ້ານພາສີ ແລະ ອາກອນ ຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ວ່າດ້ວຍພາສີ, ກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍ ວ່າດ້ວຍອາກອນຊົມໃຊ້. ໃນກໍລະນີພິເສດ ເປັນຕົ້ນ ກິດຈະການຕິດພັນກັບແຜນງານການຄ້ຳປະກັນສະບຽງອາຫານ, ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ, ການເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ພູມປັນຍາທ້ອງຖິ່ນ ຫຼື ໄພພິບັດທຳມະຊາດ ໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ ຍົກເວັ້ນ ຫຼື ຫຼຸດຜ່ອນດ້ານພາສີ ແລະ ອາກອນ ສະເໜີລັດຖະບານ ເພື່ອພິຈາລະນານຳສະເໜີ ຕໍ່ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ.

**ມາດຕາ 29 ການບໍລິການໃຫ້ຄໍາປຶກສາ ແລະ ພັດທະນາ**

ຂະແໜງການກະສິກໍາ ແລະ ປ່າໄມ້ ເປັນເຈົ້າການ ໃນການໃຫ້ຄໍາປຶກສາ ແລະ ພັດທະນາ ຜູ້ປະກອບການກະສິກໍາສະອາດ ດ້ວຍການສ້າງຕັ້ງໜ່ວຍງານ ເພື່ອເຄື່ອນໄຫວໃຫ້ບໍລິການໃຫ້ຄໍາປຶກສາ ແລະ ພັດທະນາ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂ ແລະ ກົນໄກໃນການໃຫ້ການບໍລິການໃຫ້ຄໍາປຶກສາ ໃຫ້ແກ່ຜູ້ປະກອບການກະສິກໍາສະອາດ ຕາມພະລະບົດບາດຂອງຕົນ ພ້ອມທັງຊຸກຍູ້ ແລະ ສົ່ງເສີມພາກສ່ວນຕ່າງໆ ໃຫ້ບໍລິການຄໍາປຶກສາ ແລະ ພັດທະນາ ໃຫ້ຜູ້ປະກອບການກະສິກໍາສະອາດ.

**ມາດຕາ 30 ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ**

ຂະແໜງການກະສິກໍາ ແລະ ປ່າໄມ້ ສົມທົບກັບຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃຫ້ການສະໜັບສະໜູນຜູ້ປະກອບການກະສິກໍາສະອາດ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການ, ການໂຄສະນາສິນຄ້າ, ການສຶກສາກ່ຽວກັບຕະຫຼາດ, ການແນະນໍາຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າ ທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ ແລະ ການຮ່ວມລົງທຶນ ເພື່ອຂະຫຍາຍຕະຫຼາດ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ສ້າງເງື່ອນໄຂ ແລະ ໃຫ້ໂອກາດ ປະກອບການກະສິກໍາສະອາດ ເປັນຜູ້ສະໜອງສິນຄ້າ ແລະ ການບໍລິການ ແລະ ນໍາໃຊ້ຜົນຜະລິດກະສິກໍາສະອາດ.

**ມາດຕາ 31 ການນໍາໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ**

ກະຊວງ ອຸດສາຫະກໍາ ແລະ ການຄ້າ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກ ໃຫ້ຜູ້ປະກອບການ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ແລະ ນໍາໃຊ້ຊັບສິນທາງປັນຍາ ພ້ອມທັງສົ່ງເສີມ ແລະ ອໍານວຍຄວາມສະດວກ ໃຫ້ແກ່ຜູ້ປະກອບການກະສິກໍາສະອາດ ໃນການຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດຕໍ່ຊັບສິນທາງປັນຍາ.

**ມາດຕາ 32 ການນໍາໃຊ້ ແລະ ການຖ່າຍທອດເຕັກໂນໂລຊີ**

ລັດ ສົ່ງເສີມການນໍາໃຊ້ ແລະ ການຖ່າຍທອດເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ດັ່ງນີ້:

1. ສະຖາບັນຄົ້ນຄ້ວາ ແລະ ສະຖາບັນການສຶກສາ ຄົ້ນຄວ້າທົດລອງ, ວິໄຈ, ນໍາໃຊ້ ແລະ ພັດທະນາເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຖ່າຍທອດເຕັກໂນໂລຊີດັ່ງກ່າວນໍາໃຊ້ເຂົ້າໃນ ການຜະລິດ, ການຄ້າ ແລະ ການບໍລິການ ໃຫ້ຜົນຜະລິດ ແລະ ຜະລິດຕະພັນກະສິກໍາສະອາດ ເພີ່ມຜະລິດ ຕະພາບ, ຄຸນນະພາບ, ສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
2. ສະໜອງທຶນໃນຮູບແບບຕ່າງໆ ເພື່ອນໍາໃຊ້ເຂົ້າໃນການປັບປຸງ ແລະ ຖ່າຍທອດເຕັກໂນໂລຊີ ທີ່ທັນສະໄໝ ແລະ ເຫດເໝາະກັບຄວາມຕ້ອງການ.

# ພາກທີ V
# ໜ່ວຍງານ ແລະ ການຢັ້ງຢືນ ກະສິກຳສະອາດ
## ໝວດທີ 1
## ໜ່ວຍງານກ່ຽວກັບກະສິກຳສະອາດ

**ມາດຕາ 33 ໜ່ວຍງານຄຸ້ມຄອງກະສິກຳສະອາດ**

ໜ່ວຍງານຄຸ້ມຄອງກະສິກຳສະອາດ ແມ່ນ ໜ່ວຍງານໜຶ່ງທີ່ ໄດ້ຮັບການແຕ່ງຕັ້ງຈາກ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ເຮັດໜ້າທີ່ໃນການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ.

ໜ່ວຍງານຄຸ້ມຄອງກະສິກຳສະອາດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຄຸ້ມຄອງກະສິກຳສະອາດ;
2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງກະສິກຳສະອາດ;
3. ຮັບຮອງ ມາດຕະຖານກະສິກຳອິນຊີ, ມາດຕະຖານກະສິກຳທີ່ດີ, ມາດຕະຖານສິນຄ້າຜົດ, ມາດຕະຖານອື່ນ ແລະ ຫ້ອງວິໄຈ;
4. ສ້າງລະບຽບ ການກວດກາ, ການຢັ້ງຢືນ ແລະ ການຮັບຮອງ;
5. ແຕ່ງຕັ້ງ ແລະ ມອບໝາຍພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຮອງມາດຕະຖານ, ສ້າງລະບຽບການຢັ້ງຢືນ, ລະບົບການຮັບຮອງ;
6. ແຕ່ງຕັ້ງ ແລະ ມອບໝາຍໜ້າທີ່ພາລະບົດບາດ ໃຫ້ແກ່ໜ່ວຍງານຮັບຮອງ;
7. ອອກໃບອະນຸຍາດດຳເນີນທຸລະກິດ ດ້ານການກວດກາ ແລະ ຢັ້ງຢືນ ໃຫ້ແກ່ໜ່ວຍງານອອກໃບຢັ້ງຢືນ ແລະ ໜ່ວຍງານກວດກາເຕັກນິກວິຊາການ ຕາມການສະເໜີ ແລະ ປະເມີນຜົນຂອງໜ່ວຍງານຮັບຮອງ;
8. ສ້າງ ແລະ ພັດທະນາລະບົບຂໍ້ມູນ ຂ່າວສານ, ກົນໄກການຮ່ວມມື, ແລກປ່ຽນຂໍ້ມູນຂ່າວສານຈາກຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານຄຸ້ມຄອງກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ;
9. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານຄຸ້ມຄອງກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍໜ່ວຍງານຄຸ້ມຄອງກະສິກຳສະອາດ;
10. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ຄຸ້ມຄອງກະສິກຳສະອາດ;
11. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງກະສິກຳສະອາດ ໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;
12. ນຳໃຊ້ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສຳລັບມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17011 (ISO/IEC 17011), ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065 (ISO/IEC 17065), ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17025 (ISO/IEC 17025), ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17020 (ISO/IEC 17020) ແລະ ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17021 (ISO/IEC 17021) ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 34 ໜ່ວຍງານຮັບຮອງກະສິກຳສະອາດ**

ໜ່ວຍງານຮັບຮອງກະສິກຳສະອາດ ແມ່ນ ໜ່ວຍງານໜຶ່ງທີ່ ໄດ້ຮັບການແຕ່ງຕັ້ງຈາກ ລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ເຮັດໜ້າທີ່ໃນການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ.

ໜ່ວຍງານຮັບຮອງກະສິກຳສະອາດ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ປະເມີນການເຮັດວຽກ ຂອງໜ່ວຍງານອອກໃບຢັ້ງຢືນຕາມມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065 (ISO/IEC 17065);
2. ເຮັດການກວດກາຮ່ວມກັບນັກກວດກາ ຂອງໜ່ວຍງານອອກໃບຢັ້ງຢືນ ຢ່າງໜ້ອຍ 5 ເປີເຊັນ ຂອງຈຳນວນຫົວໜ່ວຍທີ່ໄດ້ຮັບການຢັ້ງຢືນ;
3. ເຮັດການກວດກາຕິດຕາມບໍ່ຮ່ວມກັບນັກກວດກາ ຂອງໜ່ວຍງານອອກໃບຢັ້ງຢືນ ຢ່າງໜ້ອຍ 5 ເປີເຊັນ ຂອງຈຳນວນຫົວໜ່ວຍທີ່ໄດ້ຮັບການຢັ້ງຢືນ;
4. ເຮັດບົດລາຍງານ ແລະ ໜັງສືສະເໜີ ຫາ ໜ່ວຍງານຄຸ້ມຄອງກະສິກຳສະອາດ ເພື່ອອອກໃບອະນຸຍາດດຳເນີນກິດຈະການ ດ້ານກວດກາ ແລະ ຢັ້ງຢືນ ໃຫ້ແກ່ໜ່ວຍງານອອກໃບຢັ້ງຢືນ;
5. ຕ້ອງດຳເນີນງານ ແລະ ປະຕິບັດຕາມເງື່ອນໄຂມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17011 (ISO/IEC17011);
6. ສ້າງ ແລະ ພັດທະນາ ລະບົບຂໍ້ມູນ ຂ່າວສານ, ກົນໄກການຮ່ວມມື, ແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຮັບຮອງກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ;
7. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານຮັບຮອງກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງໜ່ວຍງານຄຸ້ມຄອງກະສິກຳສະອາດ;
8. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ຮັບຮອງ ກະສິກຳສະອາດ;
9. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຮັບຮອງກະສິກຳສະອາດ ໃຫ້ໜ່ວຍງານຄຸ້ມຄອງກະສິກຳສະອາດ ຢ່າງເປັນປົກກະຕິ;
10. ນຳໃຊ້ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 35 ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ**

ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ ແມ່ນ ໜ່ວຍງານໜຶ່ງທີ່ ໄດ້ຮັບການແຕ່ງຕັ້ງຈາກ ລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ເຮັດໜ້າທີ່ໃນການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ.

ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ດຳເນີນການກວດກາເຕັກນິກວິຊາການ ແລະ ພິຈາລະນາອອກໃບຢັ້ງຢືນ ຕາມຂອບເຂດມາດຕະຖານທີ່ໜ່ວຍງານຮັບຮອງອະນຸຍາດ ໃຫ້ກວດກາ;
2. ພັດທະນາລະບົບການຢັ້ງຢືນ ແລະ ລາຍການກວດກາ ຂອງຕົນເອງ ບົນພື້ນຖານເງື່ອນໄຂມາດຕະ ຖານທີ່ກຳນົດ;
3. ປະຕິບັດຕາມເງື່ອນໄຂທີ່ກ່ຽວຂ້ອງຕາມຫຼັກການມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065 (ISO/IEC 17065);
4. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານອອກໃບຢັ້ງຢືນ ແລະ ກວດກາ ກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງໜ່ວຍງານຮັບຮອງກະສິກຳສະອາດ;
5. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບວຽກງານການອອກໃບຢັ້ງຢືນກະສິກຳສະອາດ;
6. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຢັ້ງຢືນ ແລະ ກວດກາ ກະສິກຳສະອາດ ໃຫ້ໜ່ວຍງານຮັບຮອງກະສິກຳສະອາດ ຢ່າງເປັນປົກກະຕິ;
7. ນຳໃຊ້ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 36 ໜ່ວຍງານກວດກາເຕັກນິກວິຊາການກະສິກຳສະອາດ**

ໜ່ວຍງານກວດກາເຕັກນິກວິຊາການກະສິກຳສະອາດ ແມ່ນ ໜ່ວຍງານໜຶ່ງທີ່ໄດ້ຮັບການແຕ່ງຕັ້ງຈາກ ລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ເຮັດໜ້າທີ່ໃນການຈັດຕັ້ງປະຕິບັດ ວຽກງານກະສິກຳສະອາດ.

ໜ່ວຍງານກວດກາເຕັກນິກວິຊາການກະສິກຳສະອາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ດຳເນີນການກວດກາເຕັກນິກວິຊາການ ຕາມຂອບເຂດມາດຕະຖານທີ່ໜ່ວຍງານຮັບຮອງ ອະນຸຍາດໃຫ້ກວດກາ;
2. ພັດທະນາລະບົບການກວດກາ ແລະ ລາຍການກວດກາ ຂອງຕົນເອງບົນພື້ນຖານເງື່ອນໄຂມາດຕະຖານທີ່ກຳນົດ;
3. ເຮັດບົດລາຍງານຜົນການກວດກາ ໃຫ້ໜ່ວຍງານອອກໃບຢັ້ງຢືນ;
4. ປະຕິບັດຕາມເງື່ອນໄຂທີ່ກ່ຽວຂ້ອງ ຕາມຫຼັກການມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17020 (ISO/IEC 17020);
5. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານ ການກວດກາເຕັກນິກວິຊາການກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງ ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ;

6. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານກວດກາເຕັກນິກວິຊາການກະສິກຳສະອາດ ໃຫ້ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ ຢ່າງເປັນປົກກະຕິ;
7. ນຳໃຊ້ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 37 ໜ່ວຍງານຫ້ອງວິໄຈກະສິກຳສະອາດ**

ໜ່ວຍງານຫ້ອງວິໄຈກະສິກຳສະອາດ ແມ່ນ ໜ່ວຍງານໜຶ່ງທີ່ໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ເຮັດໜ້າທີ່ໃນການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ.

ໜ່ວຍງານຫ້ອງວິໄຈກະສິກຳສະອາດ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ດຳເນີນການວິເຄາະ ແລະ ວິໄຈ ຕາມຂອບເຂດມາດຕະຖານ ທີ່ໜ່ວຍງານຄຸ້ມຄອງກະສິກຳສະອາດອະນຸຍາດ ໃຫ້ກວດກາ;
2. ພັດທະນາລະບົບການວິເຄາະ ແລະ ວິໄຈ ຂອງຕົນ ບົນພື້ນຖານເງື່ອນໄຂມາດຕະຖານທີ່ກຳນົດ;
3. ປະຕິບັດຕາມເງື່ອນໄຂທີ່ກ່ຽວຂ້ອງຕາມຫຼັກການມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17025 (ISO/IEC 17025);
4. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານຫ້ອງວິໄຈ ກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
5. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບວຽກງານຫ້ອງວິໄຈກະສິກຳສະອາດ;
6. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຫ້ອງວິໄຈກະສິກຳສະອາດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;
7. ນຳໃຊ້ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການຢັ້ງຢືນ ກະສິກຳສະອາດ

**ມາດຕາ 38 ການສະເໜີຂໍການຢັ້ງຢືນກະສິກຳສະອາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍການຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ ຕ້ອງຂໍສະໝັກຜ່ານໜ່ວຍງານອອກໃບຢັ້ງຢືນ ແລະ ໜ່ວຍງານກວດກາ ແລະ ປະກອບເອກະສານດັ່ງນີ້:

1. ໃບສະເໜີ ຕາມແບບພິມ ທີ່ກະຊວງ ກະສິກຳ ແລະ ປ່າໄມ້ ກຳນົດ;
2. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ;
3. ສຳເນົາໃບອະນຸຍາດສ້າງກຸ່ມ ຫຼື ສະຫະກອນ (ຖ້າມີ);
4. ສຳເນົາໃບທະບຽນວິສາຫະກິດ (ຖ້າມີ);
5. ສຳເນົາໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ (ຖ້າມີ).

**ມາດຕາ 39 ການພິຈາລະນາອອກໃບຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ**

ກະຊວງ ກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາ ອອກໃບຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ ພາຍໃນກຳນົດ ຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບບົດລາຍງານຜົນການກວດກາ ເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດອອກໃບຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍພາຍໃນກຳນົດເວລາດັ່ງກ່າວ.

**ມາດຕາ 40 ໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ**

ໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ ມີອາຍຸ ໜຶ່ງ ປີ ນັບແຕ່ມື້ ລົງລາຍເຊັນໃສ່ໃບຢັ້ງຢືນເປັນຕົ້ນໄປ.

ການຕໍ່ອາຍຸໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ ຕ້ອງດຳເນີນການ ກ່ອນໃບຢັ້ງຢືນໝົດອາຍຸລ່ວງໜ້າ ຫົກສິບ ວັນ.

**ມາດຕາ 41 ການໂຈະ ຫຼື ຖອນ ໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ**

ໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ ຈະຖືກໂຈະ ຫຼື ຍົກເລີກ ໃນກໍລະນີດັ່ງນີ້:

1. ຕາມການສະເໜີຂອງຜູ້ຂໍການຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ;
2. ດຳເນີນລະບົບການຜະລິດກະສິກຳສະອາດ ບໍ່ສອດຄ່ອງຕາມມາດຕະຖານ ແລະ ເງື່ອນໄຂການຈັດການຜະລິດກະສິກຳອິນຊີ ແລະ ກະສິກຳທີ່ດີ ທີ່ກຳນົດໄວ້ໃນມາດຕາ 9 ຫາ ມາດຕາ 10 ຂອງ ດຳລັດ ສະບັບນີ້;
3. ໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ ໝົດອາຍຸ ແລະ ບໍ່ຂໍຕໍ່ ໃບ ຢັ້ງຢືນ;
4. ມີການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ການໂຈະ ຫຼື ຖອນໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ ມີຈຸດປະສົງ ເພື່ອໃຫ້ຜູ້ຮ້ອງຂໍ ປັບປຸງ, ແກ້ໄຂ ໃນເວລາໃດໜຶ່ງທີ່ແນ່ນອນ ໂດຍກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ແຈ້ງ ຕໍ່ຜູ້ຮ້ອງຂໍຮັບຊາບ.

ໃນກໍລະນີຜູ້ຮ້ອງຂໍ ບໍ່ປະຕິບັດຕາມໜັງສືແຈ້ງການ, ກະຊວງ ກະສິກຳ ແລະ ປ່າໄມ້ ມີສິດຍົກເລີກໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ.

**ມາດຕາ 42 ການອຸທອນ ແລະ ການຮ້ອງຮຽນ**

ໃນກໍລະນີ ຜູ້ປະກອບການ ບໍ່ໄດ້ຮັບການຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ, ມີສິດສະເໜີຂໍພິຈາລະນາຜົນການຢັ້ງຢືນຄືນໃໝ່ ຕໍ່ໜ່ວຍງານອອກໃບຢັ້ງຢືນທີ່ກ່ຽວຂ້ອງ, ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຜູ້ສະເໜີ ຕ້ອງເຮັດໜັງສືສະເໜີ ພ້ອມປະກອບຂໍ້ມູນເພີ່ມເຕີມໃຫ້ຄົບຖ້ວນ ຫາໜ່ວຍງານອອກໃບຢັ້ງຢືນ;

2. ໜ່ວຍງານອອກໃບຢັ້ງຢືນ ຄົ້ນຄວ້າ ແລະ ຊີ້ແຈງ ຕໍ່ການສະເໜີດັ່ງກ່າວ. ໃນກໍລະນີ ຜູ້ປະກອບການ ບໍ່ເຫັນດີຕໍ່ການຊີ້ແຈງດັ່ງກ່າວ, ໜ່ວຍງານອອກໃບຢັ້ງຢືນ ຕ້ອງນຳສະເໜີຂັ້ນຄຸ້ມຄອງຕໍ່ໄປ ເພື່ອພິຈາລະ ນາຕາມລະບຽບການ.

## ພາກທີ VI
## ກາໝາຍ ແລະ ສະຫຼາກ

### ມາດຕາ 43 ກາໝາຍ ແລະ ສະຫຼາກ

ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດກາໝາຍ ແລະ ສະຫຼາກ ກະສິກຳອິນຊີ ແລະ ກະສິກຳທີ່ດີ ເພື່ອໃຫ້ຜູ້ປະກອບການໄດ້ນຳໃຊ້ເຂົ້າໃນການຢັ້ງຢືນຜົນຜະລິດ ແລະ ຜະລິດຕະພັນ.

### ມາດຕາ 44 ການຕິດກາໝາຍ ຜົນຜະລິດ, ຜະລິດຕະພັນ

ຜົນຜະລິດ ແລະ ຜະລິດຕະພັນ ຂອງກະສິກຳອິນຊີ ແລະ ກະສິກຳທີ່ດີ ຕ້ອງມີສະຫຼາກ ທີ່ໄດ້ຮັບຮອງຈາກກະຊວງ ກະສິກຳ ແລະ ປ່າໄມ້ ບົ່ງບອກຂໍ້ມູນລະອຽດ ກ່ຽວກັບຜົນຜະລິດ ແລະ ຜະລິດຕະພັນ ຢ່າງຖືກຕ້ອງ ແລະ ຊັດເຈນ.

## ພາກທີ VII
## ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ

### ມາດຕາ 45 ລະບົບ ຂໍ້ມູນ ຂ່າວສານ ກະສິກຳສະອາດ

ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ, ວິເຄາະ, ວິໄຈ, ຕິດຕາມ, ກວດກາ, ຈັດເປັນລະບົບ ແລະ ສະໜອງຂໍ້ມູນ ຂ່າວສານ ໃນຮູບແບບເຈ້ຍ ແລະ ຮູບແບບຖານຂໍ້ມູນ.

### ມາດຕາ 46 ການສ້າງລະບົບຂໍ້ມູນ ຂ່າວສານ

ກະຊວງ ກະສິກຳ ແລະ ປ່າໄມ້ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ ລວມທັງການສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບກະສິກຳສະອາດ ໂດຍປະສານສົມທົບ ກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ພະແນກກະສິກຳ ແລະ ປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານ, ສຳລັບຖານຂໍ້ມູນໃຫ້ເຊື່ອມຕໍ່ກັບຖານຂໍ້ມູນ ຂອງກະຊວງ ຍຸຕິທຳ ລວມທັງການສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບທະບຽນສານ ໃນຄວາມຮັບຜິດຊອບຂອງຕົນ.

**ມາດຕາ 47 ການເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນໃນລະບົບຂໍ້ມູນ ຂ່າວສານ ກ່ຽວກັບກະສິກຳສະອາດ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

ການນຳໃຊ້ຂໍ້ມູນ ຂ່າວສານ ກະສິກຳສະອາດ ຕ້ອງໄດ້ຮັບອະນຸຍາດຈາກ ອົງການຄຸ້ມຄອງວຽກງານກະສິກຳສະອາດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VIII
## ທຸລະກິດກ່ຽວກັບກະສິກຳສະອາດ

**ມາດຕາ 48 ການດຳເນີນທຸລະກິດກ່ຽວກັບກະສິກຳສະອາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນ ທຸລະກິດນຳຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 49 ປະເພດທຸລະກິດ ກ່ຽວກັບກະສິກຳສະອາດ**

ປະເພດທຸລະກິດກະສິກຳສະອາດ ມີ ດັ່ງນີ້:

1. ການບໍລິການອອກໃບຢັ້ງຢືນ;
2. ການບໍລິການກວດກາເຕັກນິກວິຊາການ;
3. ການບໍລິການວິໄຈກະສິກຳສະອາດ;
4. ການບໍລິການໂຄສະນາກ່ຽວກັບກະສິກຳສະອາດ;
5. ທຸລະກິດປະເພດອື່ນ.

**ມາດຕາ 50 ການບໍລິການອອກໃບຢັ້ງຢືນ**

ການບໍລິການອອກໃບຢັ້ງຢືນ ດຳເນີນດ້ວຍ ການກວດກາ ແລະ ປະເມີນລະບົບການຜະລິດ ຕາມມາດຕະຖານກະສິກຳສະອາດ ເລີ່ມແຕ່ການວາງແຜນການປູກ, ຜົນຜະລິດ ແລະ ຜະລິດຕະພັນພືດ ຈົນຮອດ ການຈຳໜ່າຍ ເພື່ອລາຍງານຜົນການກວດກາປະເມີນ ແລະ ພິຈາລະນາອອກໃບຢັ້ງຢືນ. ການບໍລິການອອກໃບຢັ້ງຢືນຕ້ອງປະຕິບັດຕາມເງື່ອນໄຂຂອງມາດຕະຖານ ໄອເອສໂອ/ໄອອີຊີ 17065 (ISO/IEC 17065).

**ມາດຕາ 51 ການບໍລິການກວດກາເຕັກນິກວິຊາການ**

ການບໍລິການກວດກາເຕັກນິກວິຊາການ ດຳເນີນດ້ວຍ ການກວດກາ ແລະ ປະເມີນລະບົບການຜະລິດຕາມມາດຕະຖານກະສິກຳສະອາດ ຕັ້ງແຕ່ການວາງແຜນການປູກ, ຜົນຜະລິດ ແລະ ຜະລິດຕະພັນພືດ ຈົນຮອດ

ການຈຳໜ່າຍ ເພື່ອລາຍງານຜົນການກວດກາປະເມີນ ຕໍ່ໜ່ວຍງານອອກໃບຢັ້ງຢືນ ເພື່ອດຳເນີນການຂັ້ນຕໍ່ໄປ. ການບໍລິການກວດກາເຕັກນິກວິຊາການ ຕ້ອງປະຕິບັດຕາມເງື່ອນໄຂຂອງມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17020 (ISO/IEC 17020).

### ມາດຕາ 52 ການບໍລິການວິໄຈກະສິກຳສະອາດ

ການບໍລິການວິໄຈກະສິກຳສະອາດ ດຳເນີນດ້ວຍ ການໃຫ້ບໍລິການວິໄຈຫາ ສານພິດຕົກຄ້າງຈາກສານເຄມີ, ສິ່ງປົນເປື້ອນຂອງເຊື້ອຈຸລິນຊີ ແລະ ສິ່ງແປກປອມ ຕາມເງື່ອນໄຂທີ່ກະຊວງ ກະສິກຳ ແລະ ປ່າໄມ້ ກຳນົດລາຍການກວດກາ. ການບໍລິການວິໄຈກະສິກຳສະອາດ ຕ້ອງປະຕິບັດຕາມເງື່ອນໄຂຂອງມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17025 (ISO/IEC 17025).

### ມາດຕາ 53 ການບໍລິການໂຄສະນາກ່ຽວກັບກະສິກຳສະອາດ

ການບໍລິການໂຄສະນາ ກ່ຽວກັບກະສິກຳສະອາດຕ້ອງໃຫ້ຖືກຕ້ອງກັບເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ. ສຳລັບເນື້ອໃນການໂຄສະນາ ຕ້ອງຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ຂອງການໄດ້ຮັບການຢັ້ງຢືນ ຜົນຜະລິດ ແລະ ຜະລິດຕະພັນ ຕາມມາດຕະຖານທີ່ກຳນົດໄວ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີຈຸດປະສົງ ໂຄສະນາ ກ່ຽວກັບກະສິກຳສະອາດ ຕ້ອງຂໍອະນຸຍາດຈາກຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 54 ເງື່ອນໄຂຂອງການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ

ການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີເນື້ອທີ່, ທຶນ, ສິ່ງປຸກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;
3. ມີບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ມີນັກວິຊາການທີ່ມີຄວາມຮູ້ດ້ານກະສິກຳ ລະດັບຂັ້ນສູງຂຶ້ນໄປ ທີ່ມີໃບຢັ້ງຢືນໄດ້ຜ່ານການປະຕິບັດວຽກງານຕົວຈິງ ສຳລັບທຸລະກິດ ກ່ຽວກັບກະສິກຳ;
5. ມີເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ ທີ່ອີງການຄຸ້ມຄອງ ແລະ ກວດກາວຽກງານກະສິກຳສະອາດ ກຳນົດ.

### ມາດຕາ 55 ເອກະສານປະກອບການຂໍອະນຸຍາດ

ເອກະສານ ປະກອບການຂໍອະນຸຍາດດຳເນີນທຸລະກິດ ກະສິກຳສະອາດ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດ ຕາມແບບພິມທີ່ ກະຊວງ ກະສິກຳ ແລະ ປ່າໄມ້ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;

3. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ ທີ່ກະຊວງ ກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 56 ການພິຈາລະນາການຂໍອະນຸຍາດດຳເນີນທຸລະກິດ**

ອົງການຄຸ້ມຄອງວຽກງານກະສິກຳສະອາດ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ພາຍໃນກຳນົດ ສິບ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ໄດ້ຜ່ານການກວດການຕົວຈິງ ເປັນຕົ້ນໄປ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍພາຍໃນກຳນົດເວລາດັ່ງກ່າວ.

ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ຂັ້ນຕອນ, ເງື່ອນໄຂ ແລະ ເອກະສານປະກອບສະເພາະກ່ຽວກັບການອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ແຕ່ລະປະເພດ.

**ມາດຕາ 57 ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ມີອາຍຸການນຳໃຊ້ ສອງ ປີ ແລະ ສາມາດ ຕໍ່ໄດ້. ໃບອະນຸຍາດດຳເນີນທຸລະກິດບໍ່ສາມາດໂອນ ຫຼື ມອບໃຫ້ບຸກຄົນອື່ນນຳໃຊ້.

**ມາດຕາ 58 ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດກ່ຽວກັບກະສິກຳສະອາດ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນໃຫ້ຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ;
2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານກະສິກຳສະອາດ;
3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ຂອງພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານກະສິກຳສະອາດ;
4. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ ເຂົ້າໃນການພັດທະນາ ວຽກງານກະສິກຳສະອາດ;
5. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ;
6. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ;
7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ຈະຖືກໂຈະ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ແລະ ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ອົງການຄຸ້ມຄອງວຽກງານກະສິກຳສະອາດສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 60 ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ຈະຖືກຖອນໃນກໍລະນີ ຜູ້ດຳເນີນທຸລະກິດ ບໍ່ປະຕິບັດຕາມຄຳສັ່ງໂຈະ. ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ອົງການຄຸ້ມຄອງ ແລະ ກວດກາ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນ ເວລາ ຫ້າວັນລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດເປັນຕົ້ນໄປ.

# ພາກທີ IX
# ຂໍ້ຫ້າມ

**ມາດຕາ 61 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງການປະຕິບັດ ສິດ ແລະ ໜ້າທີ່ ຂອງຜູ້ປະກອບການ;
2. ນຳໃຊ້ກາໝາຍກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ ຕິດໃສ່ຜົນຜະລິດທີ່ບໍ່ໄດ້ຮັບການຢັ້ງຢືນ ແລະ ຜົນຜະລິດທີ່ຢູ່ໃນໄລຍະປັບປ່ຽນ;
3. ນຳໃຊ້ກາໝາຍກະສິກຳອິນຊີລາວ ແລະ ກະສິກຳທີ່ດີລາວ ຕິດໃສ່ປ້າຍໂຄສະນາ ແລະ ຫ້າງຮ້ານທົ່ວໄປ ໂດຍບໍ່ໄດ້ຮັບອະນຸຍາດ ຈາກກະຊວງ ກະສິກຳ ແລະ ປ່າໄມ້ ແລະ ຂະແໜງການກ່ຽວຂ້ອງ;
4. ແອບອ້າງ ຫຼື ໂຄສະນາ ເປັນ ກະສິກຳອິນຊີ ຫຼື ກະສິກຳທີ່ດີ ໃສ່ຜົນຜະລິດ, ຜະລິດຕະພັນ ແລະ ປັດໄຈການຜະລິດ ທີ່ບໍ່ໄດ້ຜ່ານການຢັ້ງຢືນ ຈາກໜ່ວຍງານທີ່ກ່ຽວຂ້ອງ;
5. ສ້າງແຮງຈູງໃຈ, ຊວນເຊື່ອ ແລະ ກ່າວອ້າງສັບພະຄຸນ ເກີນຄວາມເປັນຈິງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 62 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດກະສິກຳສະອາດ**

ຫ້າມ ຜູ້ດຳເນີນທຸລະກິດກະສິກຳສະອາດ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍ ແລະ ຕາມການອະນຸຍາດ;
2. ໂອນ ຫຼື ມອບ ໃບອະນຸຍາດດຳເນີນທຸລະກິດໃຫ້ຜູ້ອື່ນນຳໃຊ້;
3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;
4. ນາບຂູ່, ໃຊ້ຄວາມຮຸນແຮງ ແລະ ວາຈາທີ່ບໍ່ເໝາະສົມ ຕໍ່ພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
5. ປະຕິເສດຄວາມຮັບຜິດຊອບ, ຫຼົບຫຼີກ, ບິດເບືອນ ຫຼື ຊຸກເຊື່ອງ ຂອງກາງ;
6. ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 63 ຂໍ້ຫ້າມ ສຳລັບພະນັກງານ ແລະ ນັກກວດກາກະສິກຳສະອາດ**

ຫ້າມ ພະນັກງານ ແລະ ນັກກວດກາກະສິກຳສະອາດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ ເພື່ອຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ;
3. ທວງເອົາ, ຂໍເອົາ, ຮັບເອົາສິນບົນ;
4. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ;
5. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ອອກເອກະສານ ຫຼື ທຳລາຍເອກະສານ ໂດຍບໍ່ຖືກຕ້ອງ;
6. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການ ໂດຍບໍ່ຖືກຕ້ອງ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ X

# ການຄຸ້ມຄອງ ແລະ ການກວດກາ ວຽກງານກະສິກຳສະອາດ

## ໝວດທີ 1

## ການຄຸ້ມຄອງວຽກງານກະສິກຳສະອາດ

**ມາດຕາ 64 ການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ**

ລັດຖະບານ ຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ ລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ເປັນໃຈກາງປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ.

ການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ ປະກອບດ້ວຍ:

1. ກະຊວງ ກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ.

**ມາດຕາ 65 ສິດ ແລະ ໜ້າທີ່ ຂອງກະຊວງ ກະສິກຳ ແລະ ປ່າໄມ້**

ກະຊວງ ກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກະສິກຳສະອາດ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກະສິກຳສະອາດ;

3. ສ້າງ ແລະ ຮັບຮອງ ລະບຽບການ ກ່ຽວກັບການກວດກາ ແລະ ຢັ້ງຢືນ ກະສິກຳສະອາດ, ມາດຕະຖານກະສິກຳສະອາດ ແລະ ຫ້ອງວິໄຈ;
4. ແຕ່ງຕັ້ງ ແລະ ກຳນົດພາລະບົດບາດ ໃຫ້ພາກສ່ວນກ່ຽວຂ້ອງ ເພື່ອເຮັດໜ້າທີ່ ຄົ້ນຄວ້າ ແລະ ນຳສະເໜີ ກະຊວງ ກະສິກຳ ແລະ ປ່າໄມ້ ກ່ຽວກັບການຮັບຮອງມາດຕະຖານ, ການຄຸ້ມຄອງ, ການຮັບຮອງ, ການອອກໃບຢັ້ງຢືນ, ການກວດກາເຕັກນິກວິຊາການ ແລະ ການວິໄຈ ໃຫ້ສອດຄ່ອງຕາມມາດຕະຖານສາກົນ;
5. ສ້າງຄວາມເຂັ້ມແຂງດ້ວຍການຝຶກອົບຮົມ ກ່ຽວກັບວຽກງານກະສິກຳສະອາດ ໃຫ້ແກ່ພະນັກງານວິຊາການ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ຜູ້ປະກອບການ;
6. ແຕ່ງຕັ້ງ ແລະ ກຳນົດພາລະບົດບາດ ໃຫ້ກົມປູກຝັງ ຈັດຕັ້ງປະຕິບັດວຽກງານກວດກາ, ຮັບຮອງ ແລະ ຢັ້ງຢືນໜ່ວຍງານອອກໃບຢັ້ງຢືນ ແລະ ໜ່ວຍງານກວດກາໃຫ້ສອດຄ່ອງຕາມມາດຕະຖານ ສາກົນ ໄອເອສໂອ/ໄອອີຊີ 17011 (ISO/IEC 17011), ໄອເອສໂອ/ໄອອີຊີ 17065 (ISO/IEC 17065);
7. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດກະສິກຳສະອາດ;
8. ສ້າງ ແລະ ປັບປຸງ ລະບົບຖານຂໍ້ມູນກະສິກຳສະອາດ, ກຳນົດຂໍ້ມູນຂອງຜູ້ປະກອບການ ທີ່ໄດ້ຮັບການຢັ້ງຢືນ ທີ່ສາມາດເປີດເຜີຍຂໍ້ມູນໄດ້ ແລະ ຂໍ້ມູນທີ່ເປັນຄວາມລັບ;
9. ສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານກະສິກຳສະອາດ;
10. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ໃນຂອບເຂດທົ່ວປະເທດ;
11. ພົວພັນຮ່ວມມື ແລະ ປະສານສົມທົບກັບກະຊວງ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານກະສິກຳສະອາດ;
12. ສະຫຼຸບ ແລະ ລາຍງານຜົນ ຂອງການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ໃນຂອບເຂດທົ່ວປະເທດ ໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ ຫຼື ລຸ່ມກົດໝາຍ ກ່ຽວກັບກະສິກຳສະອາດ;
2. ໂຄສະນາ, ເຜີຍແຜ່ ກົດໝາຍ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານກະສິກຳສະອາດ ໃຫ້ທຸກພາກສ່ວນເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
3. ລົງປະເມີນຄວາມສອດຄ່ອງຂອງພື້ນທີ່ຜະລິດ ແລະ ສະຖານທີ່ປະກອບການ ຕາມກະສິກຳສະອາດ;

4. ຄົ້ນຄວ້າ, ນໍາສະເໜີຜົນການກວດກາປະເມີນຄວາມສອດຄ່ອງ ເພື່ອພິຈາລະນາອອກໃບອະນຸຍາດ ດໍາເນີນທຸລະກິດ ກະສິກໍາສະອາດ ແລະ ໃບຢັ້ງຢືນມາດຕະຖານກະສິກໍາອິນຊີລາວ ແລະ ກະສິກໍາທີ່ດີລາວ;
5. ສ້າງຄວາມເຂັ້ມແຂງດ້ວຍການຝຶກອົບຮົມ, ໃຫ້ຄໍາແນະນໍາທາງດ້ານລະບົບຄວບຄຸມພາຍໃນ ໃຫ້ແກ່ພະນັກງານວິຊາການຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ, ຜູ້ປະກອບການ ກ່ຽວກັບກະສິກໍາສະອາດ;
6. ເຂົ້າຮ່ວມໃນການຕິດຕາມກວດກາ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກະສິກໍາສະອາດ;
7. ຕິດຕາມກວດກາການນໍາໃຊ້ໃບອະນຸຍາດດໍາເນີນ ທຸລະກິດ ກະສິກໍາສະອາດ, ໃບຢັ້ງຢືນມາດຕະຖານກະສິກໍາອິນຊີລາວ ແລະ ກະສິກໍາທີ່ດີລາວ, ການນໍາໃຊ້ກາໝາຍ ແລະ ສະຫຼາກ ກະສິກໍາອິນຊີລາວ ແລະ ກະສິກໍາທີ່ດີລາວ ພ້ອມທັງລາຍງານ ໃຫ້ກະຊວງ ກະສິກໍາ ແລະ ປ່າໄມ້ ຊາບ;
8. ບັນທຶກຂໍ້ມູນ ແລະ ເກັບຮັກສາ ເພື່ອເປັນບ່ອນອີງໃນການກວດສອບຄືນຫຼັງ ກ່ຽວກັບແຫຼ່ງທີ່ມາ;
9. ປະສານສົມທົບກັບ ພະແນກການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກະສິກໍາສະອາດ;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກະສິກໍາສະອາດ ໃຫ້ກະຊວງ ກະສິກໍາ ແລະ ປ່າໄມ້, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ກ່ຽວກັບກະສິກໍາສະອາດ;
2. ໂຄສະນາ, ເຜີຍແຜ່ ກົດໝາຍ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານກະສິກໍາສະອາດ ໃຫ້ທຸກພາກສ່ວນ ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
3. ຝຶກອົບຮົມ, ໃຫ້ຄໍາແນະນໍາທາງດ້ານລະບົບຄວບຄຸມພາຍໃນ ໃຫ້ແກ່ຜູ້ຜະລິດ, ຜູ້ປະກອບການ ກ່ຽວກັບກະສິກໍາສະອາດ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກະສິກໍາສະອາດ;
5. ຕິດຕາມກວດກາການນໍາໃຊ້ໃບຢັ້ງຢືນ ແລະ ກາໝາຍກະສິກໍາອິນຊີລາວ ແລະ ກະສິກໍາທີ່ດີລາວ ພ້ອມທັງ ລາຍງານໃຫ້ຂັ້ນເທິງຂອງຕົນ ຊາບ;
6. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກະສິກໍາສະອາດ ໃຫ້ແກ່ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ**

ຂະແໜງການສາທາລະນະສຸກ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອຸດສາຫະກຳ ແລະ ການຄ້າ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຄຸ້ມຄອງ, ຕິດຕາມກວດກາວຽກງານກະສິກຳສະອາດ ແລະ ຮ່ວມມືກັບໜ່ວຍງານຄຸ້ມຄອງ ວຽກງານກະສິກຳສະອາດ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາກະສິກຳສະອາດ

**ມາດຕາ 69 ເນື້ອໃນກວດກາ**

ການກວດກາວຽກງານ ກະສິກຳສະອາດ ປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກະສິກຳສະອາດ;
2. ການປະຕິບັດໜ້າທີ່ ຂອງ ພະນັກງານ ແລະ ນັກກວດກາກະສິກຳສະອາດ;
3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານກະສິກຳສະອາດ;
5. ເນື້ອໃນອື່ນທີ່ມີຄວາມຈຳເປັນ.

**ມາດຕາ 70 ຮູບການການກວດກາ**

ການກວດກາວຽກງານກະສິກຳສະອາດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 3
## ພະນັກງານ ແລະ ນັກກວດກາກະສິກຳສະອາດ

**ມາດຕາ 71 ພະນັກງານ ແລະ ນັກກວດກາກະສິກຳສະອາດ**

ພະນັກງານ ແລະ ນັກກວດກາກະສິກຳສະອາດ ແມ່ນພະນັກງານວິຊາການປູກຝັງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້ ຫຼື ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໃຫ້ປະຕິບັດວຽກງານກວດກາຕາມມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ.

ສໍາລັບ ມາດຕະຖານ ແລະ ເງື່ອນໄຂ ຂອງ ພະນັກງານ ແລະ ນັກກວດກາກະສິກໍາສະອາດ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

### ມາດຕາ 72 ສິດ ແລະ ໜ້າທີ່ ຂອງພະນັກງານ ແລະ ນັກກວດກາກະສິກໍາສະອາດ

ພະນັກງານ ແລະ ນັກກວດກາກະສິກໍາສະອາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ແນະນໍາກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກະສິກໍາສະອາດ;
2. ລົງກວດກາ ແລະ ພິສູດຕາມຂໍ້ມູນທີ່ສະເໜີຂໍການຢັ້ງຢືນ, ກວດກາ ສະຖານທີ່ຜະລິດ, ຮ້ານຈໍາໜ່າຍ, ສາງເກັບຮັກສາ, ການໂຄສະນາ, ການນໍາເຂົ້າ, ການຂົນສົ່ງ, ການສົ່ງອອກ ແລະ ສະຖານທີ່ ກ່ຽວຂ້ອງ, ປະເມີນຂໍ້ມູນ ແລະ ລາຍງານຜົນການກວດກາທັງໝົດ;
3. ກວດກາລະບົບການຜະລິດ ຂອງຜູ້ປະກອບການ ໃຫ້ສອດຄ່ອງຕາມມາດຕະຖານກະສິກໍາອິນຊີ ຫຼື ມາດຕະຖານກະສິກໍາທີ່ດີ ຂອງ ສປປ ລາວ;
4. ເກັບຕົວຢ່າງ ຜົນຜະລິດ ແລະ ຜະລິດຕະພັນ ເພື່ອນໍາໄປວິໄຈຄຸນນະພາບ ຫຼື ນໍາໃຊ້ເປັນຫຼັກຖານ;
5. ຖອນໃບຢັ້ງຢືນທີ່ມີການດໍາເນີນບໍ່ຖືກຕ້ອງ ຕາມຂອບເຂດທີ່ລົງທະບຽນ ແລະ ເອກະສານ ທີ່ກ່ຽວຂ້ອງກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກະສິກໍາສະອາດ ພ້ອມທັງ ລາຍງານໃຫ້ໜ່ວຍງານຄຸ້ມຄອງ ແລະ ກວດກາ ວຽກງານກະສິກໍາສະອາດ;
6. ສະຫຼຸບ ແລະ ລາຍງານ ຜົນການກວດກາ ແລະ ປະກອບເອກະສານ ໃຫ້ໜ່ວຍງານຄຸ້ມຄອງ ແລະ ກວດກາວຽກງານກະສິກໍາສະອາດຂັ້ນຕົ້ນ ເພື່ອແກ້ໄຂ ໃນແຕ່ລະກໍລະນີ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 73 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດໍາລັດສະບັບນີ້, ໃນການປະຕິບັດມາດຕະຖານກະສິກໍາອິນຊີ ແລະ ກະສິກໍາທີ່ດີ ເປັນເວລາ ສາມປີ ຕິດຕໍ່ກັນ ຈະໄດ້ຮັບ ການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 74 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ດໍາລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໄໝ ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

# ພາກທີ XII
# ບົດບັນຍັດສຸດທ້າຍ

**ມາດຕາ 75 ການຈັດຕັ້ງປະຕິບັດ**

ກະຊວງ ກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 76 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**